## ຂັ້ນຕອນໃນການຍື່ນຄຳຟ້ອງຮ້ອງກ່ຽວກັບ ການລະເມີດມາດຕາ (Title) VI

1. ແບບຟອມຄຳຟ້ອງຮ້ອງກ່ຽວກັບມາດຕາ (Title ) **VI** ສາມາດດາວໂລດອອກມາຈາກເວັບໄຊຂອງ www.bart.gov ຫລືຮ້ອງຂໍເອົາຈາກຫ້ອງການວ່າດ້ວຍສິດທິພົລເມືອງ (OCR). ຄຳຟ້ອງຮ້ອງຍັງສາມາດຍື່ນເປັນລາຍລັກອັກສອນທີ່ມີທັງໝົດຂໍ້ມູນດັ່ງຕໍ່ໄປນີ້:

   a. ຊື່, ທີ່ຢູ່, ແລະເລກໂທລະສັບຂອງຜູ້ຟ້ອງຮ້ອງ
   b. ພື້ນຖານໃນການຟ້ອງຮ້ອງ (ຊົນຊາດ, ສີຜິວ, ຊາດກຳເນີດ).
   c. ວັນທີ່ໃດທີ່ເຫດການຂອງການຖືກຈຳແນກທີ່ຢູ່ໃນການກ່າວຫາ ຫຼືເຫດການນັ້ນເກີດຂຶ້ນ.
   d. ລັກສະນະຂອງເຫດການທີ່ພາໃຫ້ຜູ້ຟ້ອງຮ້ອງຮູ້ສຶກວ່າການຖືກຈຳແນກແມ່ນປະເດັນພາໃຫ້ມີການຟ້ອງຮ້ອງ.
   e. ຊື່, ທີ່ຢູ່ ແລະເລກໂທລະສັບຂອງຜູ້ທີ່ອາດຈະຮູ້ກ່ຽວກັບເຫດການ.
   f. ໜ່ວຍງານອື່ນໆ ຫຼືສານ ທີ່ຜູ້ຟ້ອງຮ້ອງອາດຈະຍື່ນເອກະສານຟ້ອງຮ້ອງ ແລະ ຊື່ຜູ້ຕິດຕໍ່.

2. ຖ້າຜູ້ຟ້ອງຮ້ອງບໍ່ສາມາດຂຽນຄຳຟ້ອງຮ້ອງໄດ້ພະນັກງານຂອງ OCR ຈະຊ່ວຍຜູ້ຟ້ອງຮ້ອງ. ຖ້າຫາກໄດ້ຖືກຮ້ອງຂໍໂດຍຜູ້ຟ້ອງຮ້ອງ OCR ບໍ່ຈະສະໜອງນາຍແປພາສາທົ່ວໄປ ຫລື ນາຍພາສາກືກໃຫ້.
3. ຜູ້ຟ້ອງຮ້ອງມີສິດທີ່ຈະຟ້ອງຮ້ອງໂດຍກົງທີ່ໜ່ວຍງານລັດຖະບານກາງທີ່ເໝາະສົມ. ຜູ້ຟ້ອງຮ້ອງຕ້ອງຍື່ນຄຳຮ້ອງພາຍໃນ 180 ວັນ ຫຼັງຈາກວັນສຸດທ້າຍຂອງເຫດການທີ່ກ່າວຫາ.
4. OCR ຈະເລີ່ມການສອບສວນພາຍໃນສິບຫ້າ (15) ວັນເຂົ້າການພາຍຫລັງວັນໄດ້ຮັບຄຳຟ້ອງຮ້ອງ.
5. OCR ຈະຕິດຕໍ່ຜູ້ຟ້ອງຮ້ອງເປັນລາຍລັກອັກສອນ ບໍ່ເກີນສາມສິບ (30) ວັນເຂົ້າການຫຼັງຈາກໄດ້ຮັບການຟ້ອງຮ້ອງ ເພື່ອຂໍຂໍ້ມູນເພີ່ມເຕີມ, ຖ້າຈຳເປັນ. ຖ້າຜູ້ຟ້ອງຮ້ອງບໍ່ໃຫ້ຂໍ້ມູນທີ່ຕ້ອງການໃຫ້ທັນເວລາ, OCR ອາດຈະປິດການຟ້ອງຮ້ອງລົງ.
6. OCR ຈະຈັດການການສອບສວນພາຍໃນເກົ້າສິບວັນ (90) ວັນເຂົ້າການ ຫລັງຈາກໄດ້ຮັບການຟ້ອງຮ້ອງ. ຖ້າຕ້ອງການເວລາສອບສວນເພີ່ມເຕີມ, ຜູ້ຟ້ອງຮ້ອງຈະໄດ້ຮັບການຕິດຕໍ່. ລາຍງານການສອບສວນ ຈະຖືກຂຽນໂດຍຜູ້ສອບສວນ. ລາຍງານນີ້ຄວນລວມເອົາລາຍລະອຽດກ່ຽວກັບເຫດການ, ຜົນການສອບສວນ ແລະ ການແກ້ໄຂທີ່ຖືກແນະນຳ.
7. ຜູ້ຟ້ອງຮ້ອງ, ຜູ້ຖືກສອບສວນ ຫລື ພະແນກທີ່ຖືກສອບສວນ ຈະໄດ້ຮັບຈົດໝາຍປິດຄະດີ. ຝ່າຍຕ່າງໆ ຈະມີເວລາ ຫ້າ (5) ມື້ເຂົ້າການ ນັບແຕ່ວັນໄດ້ຮັບຈົດໝາຍປິດຄະດີ ເພື່ອທຳການຂໍອຸທອນ. ຖ້າບຸກຄົນໃດບໍ່ສົນໃຈທີ່ຈະອຸທອນ, ການຟ້ອງຮ້ອງຈະຖືກປິດລົງ.
8. ຖ້າຕ້ອງການ, ລາຍງານການສອບສວນຈະຖືກສົ່ງໄປຫາໜ່ວຍງານລັດຖະບານກາງທີ່ເໝາະສົມ.

ມາດຕາ (Title) VI ຂອງກົດໝາຍວ່າດ້ວຍສິດທິ ພົລເມືອງປີ 1964 ກຳໜົດໄວ້ວ່າ ບໍ່ມີຜູ້ໃດຢູ່ໃນສະຫະລັດ ໂດຍອີງໃສ່ພື້ນຖານດ້ານຊົນຊາດ, ສີຜິວ ຫລື ຊາດກຳເໜີດ ຕ້ອງຖືກແບ່ງແຍກ, ຖືກປະຕິເສດບໍ່ໃຫ້ໄດ້ຮັບຜົນປະໂຫຍດ ຫລື ຕ້ອງຖືກຈຳແນກຫຍູ່ພາຍໃຕ້ໂຄງການຫລືກິດຈະກຳທີ່ໄດ້ຮັບເງິນຊ່ວຍເຫລືອຈາກລັດຖະບານກາງ. ຄຳສັ່ງບໍລິຫານຂອງປະທານາທິບໍດີ (Presidential Executive Order) ເລກທີ 12896 ລະບຸບອກວ່າ ຕ້ອງໃຫ້ຄວາມຍຸດຕິທຳທາງດ້ານສະພາບແວດລ້ອມໃຫ້ໝູ່ປະຊາຊົນຂອງຊົນເຜົ່າສ່ວນນ້ອຍ ແລະ ມີລາຍໄດ້ຕ່ຳ. ຄຳສັ່ງບໍລິຫານຂອງປະທານາທິບໍດີ (Presidential Executive Order) ເລກທີ 13166 ລະບຸບອກວ່າຕ້ອງໃຫ້ບໍລິການແກ່ທຸກຄົນທີ່ມີລະດັບຄວາມສາມາດດ້ານການໃຊ້ພາສາອັງກິດຈຳກັດ.

ຜູ້ໃດກໍຕາມທີ່ເຊື່ອວ່າພວກຕົນຖືກແບ່ງແຍກ, ຖືກປະຕິເສດບໍ່ໃຫ້ໄດ້ຮັບຜົນປະໂຫຍດ ຫລື ໄດ້ຖືກຈຳແນກສາມາດຂຽນຄຳຟ້ອງຮ້ອງສົ່ງໄປຍັງຫ້ອງການຂອງເຂດເມືອງວ່າດ້ວຍສິດທິພົລເມືອງດ້ານການຂົນສົ່ງຕໍ່ຢ່າງໄວຂອງເຂດອ່າວຊານຟຣານຊິສໂກ (San Francisco Bay Area Rapid Transit District’s Of-fice of Civil Rights). ກົດໝາຍຂອງລັດຖະບານກາງ ແລະ ຂອງລັດກຳໜົດວ່າ ຄຳຟ້ອງຮ້ອງຕ້ອງຂຽນພາຍໃນນຶ່ງຮ້ອຍແປດສິບ (180) ວັນຕາມປະຕິທິນພາຍຫລັງທີ່ມີເຫດການທີ່ຖືກກ່າວຫານັ້ນເກີດຂຶ້ນ.

ຄຳຟ້ອງຮ້ອງສົ່ງໄປທາງໄປສະນີ, ແຟັກ ຫລື ທາງອີເມລໄປຫາທີ່ຢູ່ຂ້າງລຸ່ມນີ້:

### ຕິດຕໍ່ຫາພວກເຮົາ:

**SAN FRANCISCO BAY AREA RAPID TRANSIT DISTRICT**
**ATTN: Office of Civil Rights**
**300 Lakeside Drive, Suite 1800**
**Oakland, CA 94612**
**TEL: 510-874-7333**
**FAX: 510-464-7587**
**www.bart.gov**
**officeofcivilrights@bart.gov**

# ສິດຂອງທ່ານຢູ່ໃຕ້ ມາດຕາ (Title) VI ຂອງກົດໝາຍວ່າດ້ວຍສິດທິ ພົລເມືອງປີ 1964

## ວິທີການຟ້ອງຮ້ອງ

## ແລະ

## ຟອມຂໍຟ້ອງຮ້ອງ

ມາດຕາ (Title) VI ແມ່ນກົດໝາຍ

BART

# ການຂົນສົ່ງດ້ວຍພາຫະນະເມືອງຢູ່ໃນເຂດອ່າວໃນລັດ ຊານຟຣານຊິສໂກ
## ແບບຟອມຄຳຂໍຮ້ອງຮຽນສຳລັບມາດຕາ (TITLE) VI

| | | | |
|---|---|---|---|
| ຊື່ຜູ້ຂໍຮ້ອງຮຽນ | | | ໂທລະສັບເຮືອນ |
| ທີ່ຢູ່ເຮືອນ<br>ຖະໜົນ ເມືອງ, ລັດ ລະຫັດເຂດໄປສະນີ | | | ໂທລະສັບບ່ອນເຮັດວຽກ |
| ສີຜິວ/ກຸ່ມຊົນຊາດ | ເພດ | ອີ-ເມລ | |
| ຜູ້ທີ່ຖືກຈຳແນກຕໍ່ (ຖ້ານອກຈາກຜູ້ຟ້ອງຮ້ອງ) | | | ໂທລະສັບເຮືອນ |
| ທີ່ຢູ່ເຮືອນ<br>ຖະໜົນ ເມືອງ, ລັດ ລະຫັດເຂດໄປສະນີ | | | ໂທລະສັບບ່ອນເຮັດວຽກ |

1. ພື້ນຖານໃນການຖືກຈຳແນກສະເພາະໃນທາດການ (ເລືອກຂໍ້ທີ່ເໝາະສົມ):

   ❑ ເຊື້ອຊາດ ❑ ສີຜິວ ❑ ຊາດກຳເນີດ

2. ວັນທີ່ຂອງການກະທຳການຈຳແນກທີ່ຢູ່ໃນການກ່າວຫາ ______________________________

3. ຜູ້ຖືກຟ້ອງຮ້ອງ (ຜູ້ທີ່ທ່ານຟ້ອງຮ້ອງ)

| | |
|---|---|
| ຊື່ | |
| ຕຳແໜ່ງ | ສະຖານທີ່ເຮັດວຽກ |

4. ອະທິບາຍວິທີທີ່ທ່ານຖືກຈຳແນກ. ມີຫຍັງເກີດຂຶ້ນ ແລະ ໃຜເປັນຜູ້ຮັບຜິດຊອບ? ເພື່ອຕ້ອງການບ່ອນຂຽນຕື່ມໃຫ້ສັດຕິດເຈ້ຍຂຽນຕື່ມນັ້ນ.

______________________________
______________________________
______________________________
______________________________
______________________________
______________________________
______________________________

5. ທ່ານໄດ້ຍື່ນໃບຟ້ອງຮ້ອງນີ້ນຳລັດຖະບານກາງ, ໜ່ວຍງານລັດ ຫຼືໜ່ວຍງານທ້ອງຖິ່ນ; ຫຼືສານຂອງລັດຖະບານກາງ ຫຼືສານຂອງລັດແມ່ນບໍ່?

   ❑ ແມ່ນ ❑ ບໍ່ແມ່ນ

   ຖ້າຄຳຕອບແມ່ນ, ໃຫ້ໝາຍໃສ່ທຸກໜ່ວຍງານທີ່ທ່ານຍື່ນຄຳຟ້ອງຮ້ອງນຳ:

   ❑ ໜ່ວຍງານລັດຖະບານກາງ ❑ ສານລັດຖະບານກາງ ❑ ໜ່ວຍງານລັດ ❑ ສານຂອງລັດ

   ❑ ໜ່ວຍງານທ້ອງຖິ່ນ ❑ ວັນທີ່ຍື່ນ ______________________________

6. ເອົາຂໍ້ມູນຂອງຄົນທີ່ຄວນພົວພັນນສຳລັບອົງການ ຫລື ສານອື່ນທີ່ທ່ານຍື່ນຄຳຟ້ອງຮ້ອງນຳ ເພີ້ມເຕີມອີກ:

| | | | |
|---|---|---|---|
| ຊື່ | | | |
| ທີ່ຢູ່ ຖະໜົນ | ເມືອງ, ລັດ | ລະຫັດເຂດ | ໂທລະສັບ |

ເຊັນຄຳຟ້ອງຮ້ອງສະບັບນີ້ ຢູ່ບ່ອນເປົ່າຫວ່າງຂ້າງລຸ່ມນີ້. ເອົາເອກະສານໃດໆ ທີ່ກ່ຽວຂ້ອງກັບກໍລະນີນີ້ ສັດຕິດໃສ່ນຳ.

| | |
|---|---|
| ລາຍເຊັນ | ວັນທີ |